## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 10 ງົບປະມານ ແລະ ຕາປະທັບ**

ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ເຂົ້າໃນວຽກງານທາງລັດຖະການ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 11 ການຜັນຂະຫຍາຍ**

ມອບໃຫ້ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ເປັນຜູ້ຄົ້ນຄວ້າ ສະເໜີຕໍ່ລັດຖະມົນຕີ ກ່ຽວກັບຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງບັນດາ ຫ້ອງ, ພະແນກ ແລະ ກອງ ອ້ອມຂ້າງກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ຕາມທີ່ໄດ້ລະບຸໄວ້ໃນ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 12 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ຫ້ອງວ່າການກະຊວງ, ບັນດາ ກົມໃຫຍ່, ກົມ, ກອງບັນຊາການ, ວິທະຍາຄານ, ບັນດາການຈັດຕັ້ງຂອງກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ, ຂັ້ນເມືອງ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 13 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 926/ປກສ, ລົງວັນທີ 05 ສິງຫາ 2013.

**ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ**

ກະຊວງປ້ອງກັນຄວາມສະຫງົບ

ລັດຖະມົນຕີ

**ວິໄລ ຫຼ້າຄຳຟອງ**

ໜ້າກົມ ກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງ ຂອງຂົງເຂດວຽກງານທີ່ຕົນຮັບຜິດຊອບ, ຮອງຫົວໜ້າກົມຄຸ້ມຄອງສໍາມະໂນຄົວ ແລະ ກໍ່ສ້າງຮາກຖານ ເປັນຜູ້ຮັກສາການແທນໃນເວລາຫົວໜ້າຕິດຂັດ.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 8 ຫຼັກການເຮັດວຽກ

ກົມຄຸ້ມຄອງສໍາມະໂນຄົວ ແລະ ກໍ່ສ້າງຮາກຖານ ເຮັດວຽກຕາມຫຼັກການ ດັ່ງນີ້:

1. ເຄົາລົບ, ປະຕິບັດລັດຖະທໍາມະນູນ ແລະ ກົດໝາຍ ຢ່າງເຂັ້ມງວດ;

2. ປະຕິບັດຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ບົນພື້ນຖານກົດໝາຍ, ລະບຽບການ ແລະ ຫຼັກການລວມ ທີ່ກະຊວງປ້ອງກັນຄວາມສະຫງົບ ວາງອອກ;

3. ປະຕິບັດລະບອບຫົວໜ້າດຽວ, ລວມສູນປະຊາທິປະໄຕ, ເຮັດວຽກເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ຕິດຕາມ, ກວດກາ, ພິຈາລະນາຕົກລົງວຽກງານຕາມສຽງສ່ວນຫຼາຍ, ບຸກຄົນຂຶ້ນກັບການຈັດຕັ້ງ ແລະ ຂັ້ນລຸ່ມຂຶ້ນກັບຂັ້ນເທິງ;

4. ລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ບົນພື້ນຖານແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ປະສານກົມກຽວ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ;

5. ກະທັດຮັດ, ມີປະສິດທິພາບ, ທັນສະໄໝ, ເປີດເຜີຍ, ໂປ່ງໃສ, ຍຸຕິທໍາ, ພາວະວິໄສ ແລະ ສາມາດກວດກາໄດ້ ໂດຍອີງໃສ່ປະຊາຊົນ ແລະ ພາຍໃຕ້ການກວດກາຂອງປະຊາຊົນ;

6. ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງນາຍ ແລະ ພົນຕໍາຫຼວດ;

7. ຮັບປະກັນຄວາມລັບຂອງຊາດ.

### ມາດຕາ 9 ແບບແຜນວິທີເຮັດວຽກ

ແບບແຜນວິທີເຮັດວຽກ ຂອງກົມຄຸ້ມຄອງສໍາມະໂນຄົວ ແລະ ກໍ່ສ້າງຮາກຖານມີ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນ, ກົມກຽວ ແລະ ຮ່ວມມືຢ່າງສະໜິດແໜ້ນກັບຂະແໜງການອື່ນ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ;

2. ເຮັດວຽກມີການຕິດຕາມ, ຊຸກຍູ້, ກວດກາ, ປະເມີນຜົນ, ສະຫຼຸບ ແລະ ຖອດຖອນບົດຮຽນເປັນປົກກະຕິ;

3. ປະຕິບັດລະບອບປະຈໍາການກຽມພ້ອມປະຕິບັດໜ້າທີ່ວິຊາສະເພາະຕະຫຼອດ 24 ຊົ່ວໂມງ ແລະ ລາຍງານສະພາບປະຈໍາວັນຢ່າງເປັນປົກກະຕິ ໃຫ້ຂັ້ນເທິງ;

4. ປະຕິບັດການພົວພັນປະສານງານທັງພາຍໃນ ແລະ ພາຍນອກໃຫ້ສອດຄ່ອງຕາມລະບຽບຫຼັກການ;

5. ປະຕິບັດລະບອບສ່ອງແສງ ແລະ ລາຍງານ ປະຈໍາອາທິດ, ປະຊຸມປະຈໍາເດືອນ, ໄຕມາດ, 06 ເດືອນ, 01 ປີ ແລະ ເປັນປົກກະຕິ.

5. ພະແນກ ສຳມະໂນຄົວຕ່າງດ້າວ ຊຽນຫຍໍ້ ພຕດ ເລກລະຫັດ 905;
6. ພະແນກ ອອກບັດປະຈຳຕົວ ຄົນລາວ-ຄົນຕ່າງດ້າວ ຊຽນຫຍໍ້ ພອບ ເລກລະຫັດ 906;
7. ພະແນກ ຄຸ້ມຄອງອາຊີບ-ພາຫະນະພິເສດ ຊຽນຫຍໍ້ ພອສ ເລກລະຫັດ 907;
8. ພະແນກ ປ້ອງກັນຄວາມສະຫງົບ ກຸ່ມບ້ານ ຊຽນຫຍໍ້ ພປກ ເລກລະຫັດ 908;
9. ພະແນກ ຄຸ້ມຄອງກຳລັງປ້ອງກັນຄວາມສະຫງົບ ບ້ານ ຊຽນຫຍໍ້ ພຄບ ເລກລະຫັດ 909;
10. ພະແນກ ໄອທີ ຊຽນຫຍໍ້ ພອທ ເລກລະຫັດ 910;
11. ພະແນກ ເສນາກໍ່ສ້າງຮາກຖານ ຊຽນຫຍໍ້ ພສຮຖ ເລກລະຫັດ 911;
12. ກອງກໍ່ສ້າງຮາກຖານ ຊຽນຫຍໍ້ ກສຖ ເລກລະຫັດ 912;
13. ກອງກໍ່ສ້າງຮາກຖານ ຊຽນຫຍໍ້ ກສຖ ເລກລະຫັດ 913;
14. ກອງກໍ່ສ້າງຮາກຖານ ຊຽນຫຍໍ້ ກສຖ ເລກລະຫັດ 914;
15. ກອງກໍ່ສ້າງຮາກຖານ ຊຽນຫຍໍ້ ກສຖ ເລກລະຫັດ 915;
16. ກອງກໍ່ສ້າງຮາກຖາກ ຊຽນຫຍໍ້ ກສຖ ເລກລະຫັດ 916;
17. ກອງກໍ່ສ້າງຮາກຖານ ຊຽນຫຍໍ້ ກສຖ ເລກລະຫັດ 917;
18. ກອງກໍ່ສ້າງຮາກຖານ ຊຽນຫຍໍ້ ກສຖ ເລກລະຫັດ 918;
19. ກອງກໍ່ສ້າຮາກຖານ ຊຽນຫຍໍ້ ກສຖ ເລກລະຫັດ 919;
20. ກອງກໍ່ສ້າງຮາກຖານ ຊຽນຫຍໍ້ ກສຖ ເລກລະຫັດ 920;
21. ກອງກໍ່ສ້າງຮາກຖານ ຊຽນຫຍໍ້ ກສຖ ເລກລະຫັດ 921;
22. ກອງກໍ່ສ້າງຮາກຖານ ຊຽນຫຍໍ້ ກສຖ ເລກລະຫັດ 922.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ຫົວໜ້າກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ 01 ທ່ານ;
2. ຮອງຫົວໜ້າກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ 04 ທ່ານ.

ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງ, ພະແນກ, ກອງ ທີ່ຂຶ້ນກັບກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ແມ່ນປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 7 ສິດ ແລະ ໜ້າທີ່ຂອງຫົວໜ້າ ແລະ ຮອງຫົວໜ້າກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ**

ຫົວໜ້າ ແລະ ຮອງຫົວໜ້າ ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຫົວໜ້າ ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ມີຄວາມຮັບຜິດຊອບຕໍ່ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ;

ໃນກໍລະນີ ທີ່ຫົວໜ້າບໍ່ຢູ່ ຫຼື ໄປວຽກທາງການ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ ຕ້ອງມອບສິດໃຫ້ຮອງຫົວໜ້າທ່ານໃດໜຶ່ງ ເປັນຜູ້ຮັກສາການແທນໂດຍເປັນລາຍລັກອັກສອນ.

2. ຮອງຫົວໜ້າກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ຊ່ວຍຫົວໜ້າກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ, ການມອບໝາຍ ແລະ ຮັບຜິດຊອບຕໍ່ຫົວ

ລວມທັງການປະຕິບັດນະໂຍບາຍຍ້ອງຍໍ, ເລື່ອນຊັ້ນ, ເລື່ອນຕຳແໜ່ງ ຕໍ່ກຳລັງຕຳຫຼວດຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ຕາມສາຍຕັ້ງໃນຂອບເຂດທົ່ວປະເທດ;

10. ຄົ້ນຄວ້າເລືອກເຟັ້ນ ແລະ ນຳສະເໜີຮັບກຳລັງໃໝ່ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານວິຊາສະເພາະ ໃນແຕ່ລະໄລຍະ;

11. ຕິດຕາມ, ຊຸກຍູ້, ຄຸ້ມຄອງ, ກວດກາ, ຮຽກເຊີນປະຊຸມ, ຝຶກອົບຮົມວຽກງານຕາມສາຍຕັ້ງວິຊາສະເພາະໃນຂອບເຂດທົ່ວປະເທດ;

12. ຈັດຕັ້ງ, ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ, ສຳມະນາ, ເປັນຄະນະກຳມະການ ທີ່ກ່ຽວຂ້ອງກັບວຽກງານຂອງກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ທີ່ກະຊວງປ້ອງກັນຄວາມສະຫງົບ, ອົງການຈັດຕັ້ງ ຫຼື ຂະແໜງການອື່ນຢູ່ສູນກາງ ແລະ ທ້ອງຖິ່ນ ຈັດຂຶ້ນ;

13. ລົງນາມ ບົດບັນທຶກ ການຮ່ວມມື, ແລກປ່ຽນບົດຮຽນ ແລະ ຮັບເອົາການຊ່ວຍເຫຼືອ ຈາກພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງເຫັນດີ ຂອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ;

14. ຄຸ້ມຄອງ ແລະ ນຳໃຊ້ງົບປະມານ ຮັບໃຊ້ວຽກງານວິຊາສະເພາະ, ເງິນບໍລິຫານ, ພາຫະນະ, ອາວຸດ, ອຸປະກອນເຕັກນິກ ທີ່ໄດ້ຮັບແບ່ງປັນຈາກກະຊວງປ້ອງກັນຄວາມສະຫງົບ ໃຫ້ມີປະສິດທິພາບສູງ ແລະ ສ້າງພະລາທິການກັບທີ່ ໃນການແກ້ໄຂຊີວິດການເປັນຢູ່ ຂອງນາຍ ແລະ ພົນຕຳຫຼວດ ໃນແຕ່ລະໄລຍະ;

15. ປະກອບ ແລະ ນຳໃຊ້ອາວຸດ, ອຸປະກອນ, ພາຫະນະເຕັກນິກ, ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນວຽກງານວິຊາສະເພາະ ແລະ ນຳໃຊ້ງົບປະມານຕ່າງໆ ເຂົ້າໃນການເຄື່ອນໄຫວປະຕິບັດໜ້າທີ່ຂອງກົມກອງ;

16. ສະເໜີ ປະຕິບັດນະໂຍບາຍຍ້ອງຍໍ ຕໍ່ນາຍ ແລະ ພົນຕຳຫຼວດ ຜູ້ທີ່ມີຜົນງານໃນການ ເລື່ອນຊັ້ນ, ເລື່ອນຕຳແໜ່ງ, ຍົກຂັ້ນເງິນເດືອນ, ບັນຈຸ, ສັບຊ້ອນ, ຕົກລົງແຕ່ງຕັ້ງ, ຍົກຍ້າຍ ຫຼື ປະຕິບັດວິໄນ ຕໍ່ນາຍ ແລະ ພົນຕຳຫຼວດ ຜູ້ທີ່ລະເມີດກົດໝາຍ ແລະ ລະບຽບການ;

17. ປະສານສົມທົບກັບບັນດາກົມກອງອ້ອມຂ້າງກະຊວງ, ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ ແລະ ອົງການຈັດຕັ້ງ ຫຼື ຂະແໜງການອື່ນທີ່ກ່ຽວຂ້ອງ ໃນຂອບເຂດທົ່ວປະເທດ;

18. ພົວພັນ, ຮ່ວມມືກັບຕ່າງປະເທດ ຕາມການມອບໝາຍ ຫຼື ການຕົກລົງເຫັນດີ ຂອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ;

19. ນຳໃຊ້ສິດອື່ນ ຕາມການມອບໝາຍຂອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ຫຼື ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ມີໂຄງປະກອບກົງຈັກ ດັ່ງນີ້:

| | | |
|---|---|---|
| 1. ຫ້ອງການກົມ | ຂຽນຫຍໍ້ ຫກ | ເລກລະຫັດ 901; |
| 2. ພະແນກ ການເມືອງ | ຂຽນຫຍໍ້ ພກມ | ເລກລະຫັດ 902; |
| 3. ພະແນກ ພະລາທິການ | ຂຽນຫຍໍ້ ພພລ | ເລກລະຫັດ 903; |
| 4. ພະແນກ ສຳມະໂນຄົວຄົນລາວ | ຂຽນຫຍໍ້ ພສຄ | ເລກລະຫັດ 904; |

18. ປະສານສົມທົບກັບບັນດາ ກົມ, ກອງ ວິຊາສະເພາະອ້ອມຂ້າງກະຊວງປ້ອງກັນຄວາມສະຫງົບ, ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ, ບັນດາກະຊວງ, ອົງການຈັດຕັ້ງອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານຂອງຕົນ;

19. ພົວພັນ, ຮ່ວມມືກັບຕ່າງປະເທດ, ປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ຕາມການເຫັນດີ ແລະ ໄດ້ຮັບການມອບໝາຍຈາກລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ;

20. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ໃຫ້ການນຳກະຊວງປ້ອງກັນຄວາມສະຫງົບຊາບເປັນແຕ່ລະໄລຍະ;

21. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ແລະ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 4 ຂອບເຂດສິດ**

ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ມີຂອບເຂດສິດ ດັ່ງນີ້:

1. ນຳສະເໜີ, ລາຍງານບັນຫາສະພາບຕ່າງໆ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕໍ່ຄະນະປະຈຳພັກກະຊວງ ແລະ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ເພື່ອຂໍທິດຊີ້ນຳ ແລະ ພິຈາລະນາຕົກລົງ;

2. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ, ລະບຽບການຕ່າງໆ ກ່ຽວກັບວຽກງານວິຊາສະເພາະ ຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ໃຫ້ບັນດາ ຫ້ອງ, ພະແນກ ແລະ ກອງ ທີ່ຂຶ້ນກັບກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ, ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ;

3. ຊີ້ນຳ, ບັນຊາ, ຄຸ້ມຄອງ, ຕິດຕາມ, ກວດກາ ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ຂອງກຳລັງຕຳຫຼວດ ຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ໃນຂອບເຂດທົ່ວປະເທດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

4. ນຳໃຊ້ມາດຕະການທາງດ້ານກົດໝາຍ, ວິຊາສະເພາະ ແລະ ເຕັກນິກວິທະຍາສາດທັນສະໄໝເຂົ້າໃນວຽກງານຂອງຕົນ ເພື່ອສະກັດກັ້ນ, ຕອບຕ້ານທຸກເລ່ຫຼ່ຽມກົນອຸບາຍທີ່ຫວັງທຳລາຍ, ມ້າງເພຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ;

5. ໂຈະ ຫຼື ລຶບລ້າງ ການຂຶ້ນທະບຽນ ສຳມະໂນຄົວ ແລະ ອອກບັດປະຈຳຕົວ ຄົນລາວ, ຄົນຕ່າງດ້າວ ລວມທັງການຜະລິດ ຫຼື ອອກອະນຸຍາດ ຕາປະທັບ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

6. ຄົ້ນຄວ້ານຳສະເໜີລັດຖະມົນຕີອະນຸມັດອອກບັດອະນຸຍາດຖືອາວຸດ ແລະ ຜະລິດຕາປະທັບຂອງລັດບໍລິຫານ ແລະ ກວດກາຄຸ້ມຄອງຕາປະທັບວິສາຫະກິດໃນຂອບເຂດທົ່ວປະເທດ;

7. ຜະລິດ, ອອກ ແລະ ລຶບລ້າງ ບັດອະນຸຍາດຖືປືນ ຕາມການຕົກລົງຂອງຂັ້ນເທິງ;

8. ສະເໜີສ້າງຕັ້ງ ຫຼື ລຶບລ້າງ ກົງຈັກການຈັດຕັ້ງ ຂອງກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງນາຍຕຳຫຼວດ ຂັ້ນ ຫ້ອງ, ພະແນກ, ກອງ ແລະ ອອກຂໍ້ຕົກລົງແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຂັ້ນໜ່ວຍງານ ທີ່ຂຶ້ນກັບ ຫ້ອງ, ພະແນກ, ກອງ ອ້ອມຂ້າງກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ຕາມກົດໝາຍ ແລະ ລະບຽບການ;

9. ມີຄຳເຫັນ ຕໍ່ການປັບປຸງກົງຈັກການຈັດຕັ້ງ ກ່ຽວກັບວຽກງານຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ແລະ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ

5. ຊອກຮູ້ກໍາແໜ້ນສະພາບການການເໜັງຕີງຂອງພົນລະເມືອງລາວ ແລະ ການເຄື່ອນໄຫວຂອງກຸ່ມຄົນບໍ່ດີເພື່ອມີວິທີການ, ມາດຕະການສະກັດກັ້ນ, ຕອບຕ້ານ ແລະ ແກ້ໄຂຢ່າງທັນການ;

6. ກວດກາ, ຄຸ້ມຄອງ ການເຄື່ອນໄຫວເໜັງຕີງຂອງພົນລະເມືອງ, ເກັບກໍາສະຖິຕິ, ຈົດທະບຽນຄຸ້ມຄອງສໍາມະໂນຄົວຄົນລາວ, ຄົນຕ່າງດ້າວ ໃຫ້ເຂົ້າລະບົບຖືກຕ້ອງ ສອດຄ່ອງກັບກົດໝາຍ ແລະ ຮັບປະກັນຫຼັກການວິຊາສະເພາະ;

7. ຄົ້ນຄວ້າ ຈົດທະບຽນປະຫວັດຂອງບຸກຄົນ ເພື່ອຕິດຕາມ, ກວດກາ, ຄຸ້ມຄອງ ແລະ ຮັບປະກັນໃຫ້ແກ່ການອອກບັດປະຈໍາຕົວຂອງພົນລະເມືອງລາວ ແລະ ຄົນຕ່າງດ້າວ;

8. ຄົ້ນຄວ້າ, ຈົດທະບຽນ, ກວດກາ, ຄຸ້ມຄອງອາຊີບ-ພາຫະນະພິເສດ ທີ່ພົວພັນເຖິງຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຕາມຫຼັກການວຽກງານວິຊາສະເພາະ;

9. ຫັນລົງກໍ່ສ້າງຮາກຖານການເມືອງຕາມແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ທິດຊີ້ນໍາຂອງຂັ້ນເທິງ ໃນແຕ່ລະໄລຍະ;

10. ຄົ້ນຄວ້າ, ປັບປຸງ ກໍາລັງປ້ອງກັນຄວາມສະຫງົບ ກຸ່ມບ້ານ, ປ້ອງກັນຄວາມສະຫງົບ ບ້ານ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ ແລະ ເຄື່ອນໄຫວເຮັດໜ້າທີ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ມີຄວາມສະຫງົບ ແລະ ປອດໄພຮອບດ້ານ;

11. ຊຸກຍູ້, ຕິດຕາມ, ກວດກາ, ຄຸ້ມຄອງການຜະລິດ ແລະ ຕິດປ້າຍເຮືອນໃນຂອບເຂດທົ່ວປະເທດ;

12. ຄົ້ນຄວ້າ ເອກະສານການຜະລິດຕາປະທັບທີ່ອີງການຈັດຕັ້ງພັກ-ລັດອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ ລວມທັງ ຊຸກຍູ້, ຕິດຕາມ, ກວດກາ, ຄຸ້ມຄອງການຜະລິດຕາປະທັບວິສາຫະກິດໃນຂອບເຂດທົ່ວປະເທດ;

13. ຄົ້ນຄວ້າ ນໍາໃຊ້ເຕັກໂນໂລຊີເຂົ້າໃນການຄຸ້ມຄອງວຽກງານວິຊາສະເພາະ ຂອງກົມຄຸ້ມຄອງສໍາມະໂນຄົວ ແລະ ກໍ່ສ້າງຮາກຖານ;

14. ຄົ້ນຄວ້ານໍາສະເໜີ ປັບປຸງກົງຈັກການຈັດຕັ້ງ ແລະ ແຕ່ງຕັ້ງ, ຍົກຍ້າຍ, ບັນຈຸສັບຊ້ອນ, ຄຸ້ມຄອງ, ກວດກາ ແລະ ນໍາສະເໜີປະຕິບັດນະໂຍບາຍດ້ານຕ່າງໆຕໍ່ ນາຍ ແລະ ພົນຕໍາຫຼວດ ເຊັ່ນ ຍ້ອງຍໍ, ເລື່ອນຊັ້ນ, ພັກປະຈໍາປີ, ບໍານານ ແລະ ປະຕິບັດວິໄນຕໍ່ຜູ້ທີ່ລະເມີດກົດໝາຍ ແລະ ລະບຽບການ;

15. ປະສານສົມທົບກັບກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ທີ່ກ່ຽວຂ້ອງຕໍ່ການປັບປຸງກົງຈັກການຈັດຕັ້ງ, ການແຕ່ງຕັ້ງ, ການຍົກຍ້າຍການປະຕິບັດນະໂຍບາຍຕ່າງໆຕໍ່ກໍາລັງຕໍາຫຼວດຄຸ້ມຄອງສໍາມະໂນຄົວ ແລະ ກໍ່ສ້າງຮາກຖານ ຕາມສາຍຕັ້ງຂອງຕົນໃນຂອບເຂດທົ່ວປະເທດ;

16. ຂຶ້ນແຜນງົບປະມານ, ພາຫະນະວັດຖຸປະກອນ, ຮັບໃຊ້ ໃຫ້ແກ່ວຽກງານກົມຄຸ້ມຄອງສໍາມະໂນຄົວ ແລະ ກໍ່ສ້າງຮາກຖານ ແລະ ຄຸ້ມຄອງ, ກວດກາການຈັດຕັ້ງປະຕິບັດງົບປະມານລາຍຮັບ-ລາຍຈ່າຍຢູ່ໃນຄວາມຮັບຜິດຊອບຂອງຕົນ, ກໍ່ສ້າງພື້ນຖານວັດຖຸເຕັກນິກ, ອອກແຮງງານສ້າງພະລາທິການກັບທີ່ ເພື່ອແກ້ໄຂຊີວິດການເປັນຢູ່ຂອງ ນາຍ ແລະ ພົນຕໍາຫຼວດ ໃນກົມຄຸ້ມຄອງສໍາມະໂນຄົວ ແລະ ກໍ່ສ້າງຮາກຖານ;

17. ຄຸ້ມຄອງການນໍາໃຊ້ ແລະ ປົກປັກຮັກສາວັດຖຸສິ່ງຂອງ ທີ່ເປັນຊັບສິນຂອງລັດ ແລະ ລວມໝູ່;

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ (ຂຽນເປັນຕົວອັກສອນຫຍໍ້ ຄກຖ ແລະ ມີເລກລະຫັດ 509) ແມ່ນກົງຈັກການຈັດຕັ້ງໜຶ່ງທີ່ຂຶ້ນກັບກະຊວງປ້ອງກັນຄວາມສະຫງົບ ມີຖານະທຽບເທົ່າບັນດາກົມເອກະລາດ ທີ່ຂຶ້ນກັບກະຊວງ ຢູ່ພາຍໃຕ້ການ ນຳພາ ຊີ້ນຳເດັດຂາດ, ໂດຍກົງ ແລະ ຮອບດ້ານ ຂອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ.

ມີພາລະບົດບາດເປັນເສນາທິການໃຫ້ແກ່ກະຊວງປ້ອງກັນຄວາມສະຫງົບ ໃນການກຳນົດແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ, ການຊີ້ນຳ, ບັນຊາ, ຄຸ້ມຄອງ, ຕິດຕາມ ກວດກາ, ປັບປຸງ, ສ້າງ ແລະ ພັດທະນາວຽກງານເຫຼົ່າວິຊາສະເພາະຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ເປັນຕົ້ນ ວຽກງານ ການກຳແໜ້ນສະພາບການການເຄື່ອນໄຫວ ຂອງກຸ່ມຄົນບໍ່ດີ ແລະ ມີວິທີການ ມາດຕະການສະກັດກັ້ນ, ຕອບຕ້ານ ແລະ ແກ້ໄຂຢ່າງທັນການ, ຈັດຕັ້ງປະຕິບັດວຽກງານຄຸ້ມຄອງສຳມະໂນຄົວ, ອອກບັດປະຈຳຕົວ, ຄຸ້ມຄອງອາຊີບ-ພາຫະນະພິເສດ, ຜະລິດຕາປະທັບ, ປັບປຸງ ກໍ່ສ້າງກຳລັງປ້ອງກັນຄວາມສະຫງົບ ກຸ່ມບ້ານ, ປ້ອງກັນຄວາມສະຫງົບ ບ້ານ ແລະ ວຽກງານກໍ່ສ້າງຮາກຖານການເມືອງ ໃນຂອບເຂດທົ່ວປະເທດ ເພື່ອເຮັດໃຫ້ປະເທດຊາດ ມີຄວາມຮັບປະກັນຄວາມສະຫງົບທາງດ້ານການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ ມະຕິ, ຄຳສັ່ງ, ທິດທາງແຜນການຂອງຂັ້ນເທິງ ເພື່ອຫັນເປັນແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການອັນລະອຽດຂອງຕົນ ແລະ ຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ;

2. ສຶກສາອົບຮົມ ດ້ານການເມືອງແນວຄິດ ໃຫ້ນາຍ ແລະ ພົນຕຳຫຼວດ ໃນຄວາມຮັບຜິດຊອບຂອງຕົນ ມີແນວຄິດໜັກແໜ້ນ, ມີຄວາມຈົ່ງຮັກພັກດີ ແລະ ຕັ້ງຕໍ່ບໍລິສຸດຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ, ມີສະຕິຕໍ່ການຈັດຕັ້ງມີລະບຽບວິໄນເຂັ້ມງວດ, ມີຈັນຍາບັນ-ຈັນຍາທຳ ໃນການປະຕິບັດໜ້າທີ່ ມີແບບແຜນການດຳລົງຊີວິດປອດໃສຂາວສະອາດ, ມີຄວາມສາມັກຄີເປັນປຶກແຜ່ນ ພ້ອມກັນເຮັດສຳເລັດໜ້າທີ່ການເມືອງທີ່ພັກ-ລັດ ແລະ ປະຊາຊົນມອບໝາຍໃຫ້;

3. ຄົ້ນຄວ້າ, ສ້າງ, ປັບປຸງ ບັນດານິຕິກຳ, ລະບຽບການຕ່າງໆ ທີ່ພົວພັນເຖິງຂົງເຂດວຽກງານກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ເພື່ອນຳສະເໜີຂັ້ນເທິງອະນຸມັດປະກາດໃຊ້ຢ່າງເປັນທາງການ ພ້ອມທັງຈັດຕັ້ງເຜີຍແຜ່, ປະຕິບັດ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ;

4. ຊີ້ນຳ, ບັນຊາ, ຄຸ້ມຄອງ, ຕິດຕາມ, ກວດກາ, ບຳລຸງ, ສ້າງ, ປັບປຸງ ນາຍ ແລະ ພົນຕຳຫຼວດ ຂອງກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ແລະ ຕາມສາຍຕັ້ງໃນຂອບເຂດທົ່ວປະເທດ ໃຫ້ເຂັ້ມແຂງທາງດ້ານການຈັດຕັ້ງ, ໜັກແໜ້ນທາງດ້ານການເມືອງແນວຄິດ, ມີຄວາມຊຳນານທາງດ້ານວິຊາສະເພາະ ແລະ ແບບແຜນວິທີເຮັດວຽກຢ່າງມີວິທະຍາສາດທັນສະໄໝເທື່ອລະກ້າວ;

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງປ້ອງກັນຄວາມສະຫງົບ

ເລກທີ...945.../ປກສ

ນະຄອນຫຼວງວຽງຈັນ, ວັນທີ 03 ພຶດສະພາ 2023

# ຂໍ້ຕົກລົງ

# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ

# ຂອງກົມຄຸ້ມຄອງສໍານະໂນຄົວ ແລະ ກໍ່ສ້າງຮາກຖານ

- ອີງຕາມ ກົດໝາຍວ່າດ້ວຍກໍາລັງປ້ອງກັນຄວາມສະຫງົບ ປະຊາຊົນ ສະບັບເລກທີ 20/ສພຊ, ລົງວັນທີ 09 ພຶດສະພາ 2017;
- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 306/ນຍ, ລົງວັນທີ 19 ກັນຍາ 2018;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການກໍານົດໂຄງຮ່າງກົງຈັກການຈັດຕັ້ງ ຂອງກົມຄຸ້ມຄອງສໍານະໂນຄົວ ແລະ ກໍ່ສ້າງຮາກຖານ ສະບັບເລກທີ 2185/ປກສ, ລົງວັນທີ 05 ທັນວາ 2022;
- ອີງຕາມ ໜັງສືສະເໜີຂອງຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 408/ຫວກ, ລົງວັນທີ 26 ເມສາ 2023 ໂດຍຜ່ານການຄົ້ນຄວ້າເຫັນດີເປັນເອກະພາບ ລະຫວ່າງ ກົມນິຕິກໍາ ແລະ ກົດໝາຍ ຫ້ອງວ່າການກະຊວງ ແລະ ກົມຄຸ້ມຄອງສໍານະໂນຄົວ ແລະ ກໍ່ສ້າງຮາກຖານ.

## ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ, ການເຄື່ອນໄຫວວຽກງານວິຊາສະເພາະຂອງກົມຄຸ້ມຄອງສໍານະໂນຄົວ ແລະ ກໍ່ສ້າງຮາກຖານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ປັບປຸງ, ສ້າງ ແລະ ພັດທະນາເຫຼົ່າວິຊາສະເພາະຄຸ້ມຄອງສໍານະໂນຄົວ ແລະ ກໍ່ສ້າງຮາກຖານ ໃນຂອບເຂດທົ່ວປະເທດ ໃຫ້ປອດໃສ, ເຂັ້ມແຂງ ໜັກແໜ້ນ ທາງດ້ານການເມືອງແນວຄິດ, ດ້ານການຈັດຕັ້ງ, ມີລະບຽບວິໄນເຂັ້ມງວດ, ມີຄວາມຊໍານານ ທາງດ້ານວຽກງານວິຊາສະເພາະ ແລະ ມີແບບແຜນທັນສະໄໝ.